*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, [Fast Track], 33-41*
*https://doi.org/10.69692/SUJMRD12(Fast track)33*

# Factors Influencing Parents' Decision-Making in Sending Their Children to Public Primary Schools in Luang Prabang Municipality, Luang Prabang Province

**Suechang YIAMACHANG*[1], Kongsy PHIMMAVONG[2], Bounmor VONGSIPASEAUTH[3], Fongmany ONSENGTAVANH[4], Her KHAMMELEESAYSUE[5]**

*Faculty of Education, Souphanouvong University, Lao PDR*

[*]***Correspondence:*** *Suechang YIAMACHANG, Faculty of Education, Souphanouvong University, Tel: +856 20 96164835Email: suechangyiamachang@gmail.com*

[2]*Faculty of Engineering, Souphanouvong University, Tel: +856 20 28580789, Email: kp.202026@gmail.com*

[3] *Faculty of Education, Souphanouvong University, Tel: +856 20 55247424, Email: vboumor@su.edu.la*

***Article Info:***
***Submitted: February 05, 2026***
***Revised: February 012, 2026***
***Accepted: February 23, 2026***

**Abstract**

This is a quantitative research study that aims to: 1) study of parents' decision-making in sending their children to public primary schools in Luang Prabang Municipality, Luang Prabang Province; 2) study of parents' opinions on factors influencing their decision to send their children to public primary schools in Luang Prabang Municipality, Luang Prabang Province; and 3) study factors influencing parents' decision making in sending their children to public primary schools in Luang Prabang Municipality, Luang Prabang Province. The population of this study consisted of parents of students enrolled in 20 public primary schools in the Luang Prabang Municipality, Luang Prabang Province, in the 2025–2026 academic year. The sample size of 346 participants was determined using the Krejcie and Morgan table. The research instrument was a 5-point scale questionnaire. The data were analyzed using descriptive statistics to determine the mean ($\bar{X}$) and standard deviation (S.D), as well as inferential statistics, specifically Multiple Regression Analysis.

The results of this study indicated that: 1) Parental decision-making in sending their children to public primary schools in Luang Prabang Municipality, Luang Prabang Province, was found to be at a high level overall. Key factors included: reasonable registration fees and expenses suitable for family economic conditions; personnel and teachers having good human relations and being ready to provide advice; school buildings and environments being safe and conducive to learning; and confidence in the school's reputation and educational standards. 2) Parental opinions regarding the factors influencing their decision-making, both overall and in each individual dimension, were rated at a high level across five dimensions: personnel within the school, school buildings and environment, expenses, school reputation, and instructional management.3) The Multiple Regression Analysis (MRA) revealed that the factors influencing parents' decision-making in sending their children to public primary schools in Luang Prabang Municipality were: personnel within the school, school buildings and environment, and expenses. These three factors together could significantly predict parental decision-making at a rate of 73.8% with $\alpha = 0.05$.

**Keyword:** Factors Influencing, Decision-Making, Public Primary Schools, Parents

## 1. ພາກສະເໜີ

ຊັບພະຍາກອນມະນຸດ ແມ່ນປັດໄຈສຳຄັນຢ່າງໜຶ່ງ ໃນການພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນກ້າວໜ້າ ແລະ ທັນສະໄໝຕາມການປ່ຽນແປງຂອງກະແສສັງຄົມ, ດ້ວຍເຫດນີ້ລັດຖະບານແຫ່ງ ສປປ ລາວ ຍາມໃດກໍ່ໄດ້ໃຫ້ ຄວາມສຳຄັນກ່ຽວກັບບັນຫານີ້ (Ministry of Education and Sports, 2020). ການສຶກສາໃນຊັ້ນປະຖົມ ແມ່ນການສຶກສາເບື້ອງຕົ້ນຂອງສາຍສາມັນສຶກສາ, ມີກຳນົດເວລາຮຽນຫ້າປີ ເພື່ອຮັບປະກັນໃຫ້ຜູ້ຮຽນ ມີຄວາມຮູ້ທົ່ວໄປທາງດ້ານວິທະຍາສາດທຳມະຊາດ - ສັງຄົມ ແລະ ມະນຸດສາດ, ມີຄວາມສາມາດໃນການຟັງ, ການອ່ານ, ການເວົ້າ, ການເບິ່ງ, ການຖາມ, ການຂຽນ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ພາສາລາວ ແລະ ການຄິດໄລ່, ຮູ້ຮັກສາສຸຂະພາບ, ຮັກສາຄວາມສະອາດ, ຮັກສິ່ງແວດລ້ອມ ແລະ ຮູ້ສີລະປະວັດທະນະທຳລາວ. ໂດຍຖືເປັນການສຶກສາພາກບັງຄັບ ສຳລັບ ພົນລະເມືອງລາວບັນດາເຜົ່າ ທີ່ມີອາຍຸ ແຕ່ຫົກປີຂຶ້ນໄປ, ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບວາງມາດຕະການທີ່ເໝາະສົມ ເພື່ອຮັບປະກັນໃຫ້ຄົນລາວ ເປັນຕົ້ນແມ່ນເດັກທຸກຄົນທີ່ຢູ່ໃນເກນອາຍຸຮຽນ ມີໂອກາດເຂົ້າຮຽນຢ່າງທົ່ວເຖິງ. ສັງຄົມ, ຊຸມຊົນ, ພໍ່ແມ່ ຫຼື ຜູ້ປົກຄອງຕ້ອງຮັບປະກັນໃຫ້ເດັກທຸກຄົນໄດ້ຮຽນຈົບຊັ້ນປະຖົມສຶກສາ (Ministry of Education and Sports, 2016). ຕາມກົດໝາຍການສຶກສາຂອງ ສປປ ລາວ ສະບັບປີ 2015, ລັດຖະບານໄດ້ກຳນົດໃຫ້ການສຶກສາປະຖົມສຶກສາເປັນການສຶກສາບັງຄັບ ແລະ ມີ 5 ປີຮຽນ (ແຕ່ຊັ້ນປະຖົມປີທີ 1 ຈົນເຖິງ ປີທີ 5 ສຳລັບເດັກອາຍຸ 6-10 ປີ ຍ້ອນວ່າການສຶກສາແມ່ນການນຳເອົາຄວາມຮູ້ມາປັບປຸງໃຫ້ເໝາະກັບໂອກາດ ແລະ ສະພາບສັງຄົມທີ່ປ່ຽນໄປໃນປັດຈຸບັນ (National Assembly, 2015)

ນະຄອນຫຼວງພະບາງ ເປັນເມືອງທີ່ມີຄຸນລັກສະນະພິເສດດ້ວຍເປັນມໍລະດົກໂລກຂອງ UNESCO ນັບແຕ່ປີ 1995 ແລະ ເປັນສູນກາງການທ່ອງທ່ຽວທີ່ສຳຄັນ. ດ້ວຍລັກສະນະທີ່ມີປະຊາກອນທີ່ຫຼາກຫຼາຍ ທັງຄົນທ້ອງຖິ່ນ ແລະ ຊາວຕ່າງຊາດ ປະກອບກັບການພັດທະນາເສດຖະກິດ ແລະ ການທ່ອງທ່ຽວທີ່ເຕີບໂຕຢ່າງຕໍ່ເນື່ອງ (UNESCO, 2019) ໄດ້ນຳມາສູ່ການປ່ຽນແປງທາງສັງຄົມ ແລະ ເສດຖະກິດທີ່ສຳຄັນ. ການປ່ຽນແປງທີ່ສຳຄັນປະການໜຶ່ງ ແມ່ນການເພີ່ມຂຶ້ນຂອງໂຮງຮຽນເອກະຊົນ ນັບແຕ່ການປະຕິຮູບເສດຖະກິດ ແລະ ການເປີດປະເທດໃນທົດສະວັດ 1990. ໂຮງຮຽນເອກະຊົນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງເພື່ອຊ່ວຍແກ້ໄຂບັນຫາການຂາດແຄນສະຖານສຶກສາ ແລະ ຕອບສະໜອງຄວາມຕ້ອງການທີ່ຫຼາກຫຼາຍຂອງຜູ້ປົກຄອງ (Ministry of Education and Sports, 2018). ການເປັນພົນເມືອງທີ່ເພີ່ມຂຶ້ນ, ລາຍໄດ້ທີ່ດີຂຶ້ນ ແລະ ຄວາມຄາດຫວັງທີ່ສູງຂຶ້ນຕໍ່ການສຶກສາຂອງລູກຫຼານ (World Bank, 2020) ໄດ້ສົ່ງຜົນໃຫ້ເກີດຄຳຖາມກ່ຽວກັບການເລືອກຮູບແບບການສຶກສາທີ່ເໝາະສົມ ແລະ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນ.

ການເລືອກສະຖານສຶກສາໃຫ້ກັບລູກຈຶ່ງມີຄວາມສຳຄັນຕໍ່ຜູ້ປົກຄອງ ເພາະວ່າຜູ້ປົກຄອງມີຄວາມຄາດຫວັງໃຫ້ລູກໄດ້ຮັບການສຶກສາທີ່ດີທີ່ສຸດ ພໍ່ແມ່ຜູ້ປົກຄອງຈຶ່ງຈຳເປັນຕ້ອງພິຈາລະນາເລືອກສະຖານສຶກສາທີ່ມີຄຸນນະພາບໃຫ້ກັບລູກຂອງຕົນໃຫ້ເໝາະສົມກັບໄວ ແລະ ຖານະເສດຖະກິດຂອງຄອບຄົວ. ຢ່າງໃດກໍຕາມ ສະຖານສຶກສາທີ່ຈັດການຮຽນ-ການສອນໃນລະດັບຊັ້ນປະຖົມສຶກສານັ້ນ ທັງສະຖານສຶກສາຂອງພາກລັດ ແລະ ພາກເອກະຊົນ ແລະ ຜູ້ປົກຄອງນັກຮຽນທີ່ມີທາງເລືອກຈຳນວນຫຼາຍກໍນິຍົມສົ່ງລູກເຂົ້າຮຽນລະດັບປະຖົມສຶກສາຂອງພາກເອກະຊົນ ເຊິ່ງໃນສະຖານສຶກພາກສາເອກະຊົນນັ້ນ ຜູ້ປະກອບການຕ້ອງມີຈັນຍາບັນ ແລະ ຈິດສຳນຶກຄວາມຮັບຜິດຊອບຕໍ່ສັງຄົມສູງເຊັ່ນກັນ ເພາະວ່າສະຖານສຶກສາທີ່ຈັດໂດຍເອກະຊົນຍ່ອມມີລັກສະນະການບໍລິຫານການສຶກສາສ່ວນໜຶ່ງຂຶ້ນກັບຈຸດມຸ່ງໝາຍຂອງເຈົ້າຂອງສະຖານສຶກສາ ແລະ ອີກສ່ວນໜຶ່ງຕ້ອງປະຕິບັດຕາມລະບຽບຂອງກະຊວງສຶກສາທິການ ແລະ ກິລາໄດ້ກຳນົດໄວ້. ດັ່ງນັ້ນ, ຄຸນນະພາບການສຶກສາຈຶ່ງຂຶ້ນຢູ່ກັບປະສິດທິພາບໃນການດຳເນີນງານຂອງກສະຖານສຶກສາໃນຫຼາຍໆລັກສະນະ ເຊັ່ນ: ການຈັດການຮຽນການສອນໄດ້ສະໜອງ ແລະ ສອດຄ່ອງກັບຈຸດປະສົງຂອງສະຖານສຶກສາຢ່າງມີປະສິດທິພາບ, ມີອາຄານຮຽນ ແລະ ສິ່ງແວດລ້ອມທີ່ຊ່ວຍສົ່ງເສີມໃຫ້ເກີດການຮຽນຮູ້ຫຼາຍເທົ່າໃດ, ການມີຄູທີ່ມີປະສິດທິພາບສູງ, ໂດຍປັດຈຸບັນມີສະຖານສຶກສາພາກເອກະຊົນຈຳນວນຫຼາຍ ແລະ ແຕ່ລະແຫ່ງອາດມີຄຸນນະພາບ ຫຼື ແນວທາງໃນການຈັດການສຶກສາ ແລະ ກຽມຄວາມພ້ອມທີ່ຕ່າງກັນ ຜູ້ປົກຄອງທີ່ຈະສົ່ງລູກເຂົ້າຮຽນຈຶ່ງຕ້ອງພິຈາລະນາເລືອກຈາກປັດໄຈຕ່າງໆ (Waidee, 2017). ແຕ່ອີກມູມໜຶ່ງໃນປັດຈຸບັນ ພາຍໃຕ້ສະພາບເສດຖະກິດໂລກ ແລະ ຄ່າຄອງຊີບແພງນັ້ນ ຍັງມີສະຖານການສຶກສາທາງພາກລັດທີ່ຍັງໄດ້ຮັບຄວາມນິຍົມຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນ. ດັ່ງນັ້ນ, ບໍ່ວ່າດ້ວຍເຫດໃດກໍຕາມ ໄດ້ມີການວິໄຈຂອງຫຼາຍໆທ່ານໄດ້ສຶກສາຄົ້ນຄວ້າ ກ່ຽວກັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າທັງໃນພາກລັດ ແລະ ເອກະຊົນ ເຊັ່ນ: Mueangnon & Atiwittayaporn (2023), Khamvongsi et al. (2023), Manivanh et al. (2021), Nguanngamsri et al. (2018), Wacharadhorntumrong et al. (2024) ແລະ Disapong et al. (2016) ພົບວ່າ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນ ມັກປະກອບດ້ວຍຫຼາຍໆປັດໄຈທີ່ເປັນອົງ ຄື: 1) ປັດໄຈດ້ານຄູ-ການເອົາໃຈໃສ່ນັກຮຽນຢ່າງສະໝໍ່າສະເໝີຂອງຄູ, 2) ປັດໄຈດ້ານການຈັດປະສົບການການຮຽນ-ການສອນ, 3) ປັດໄຈດ້ານບໍການບໍລິການ, ການຈັດບໍລິການອາຫານເສີມມື້ທ່ຽງ, 4) ປັດໄຈດ້ານຄ່າໃຊ້ຈ່າຍ, 5) ປັດໄຈດ້ານທີ່ຕັ້ງ, 6) ປັດໄຈດ້ານຄວາມຊື່ສຽງຂອງໂຮງຮຽນ, 7) ປັດໄຈດ້ານທັດສະນະຄະຕິຂອງຜູ້ປົກຄອງ, 8) ປັດໄຈດ້ານບຸກຄະລາກອນ, 9) ປັດໄຈດ້ານວິຊາການ, 10) ປັດໄຈດ້ານຄ່ານິຍົມຂອງນັກຮຽນ ແລະ ຜູ້ປົກຄອງ, 11) ປັດໃດ້ານການບໍລິຫານໂຮງຮຽນ, 12) ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ ແລະ ປັດໄຈດ້ານອື່ນໆ ແລະ ຈາກບົດສະຫຼຸບຂອງຫ້ອງການສຶກສາທິການ ແລະ ກິລານະຄອນຫຼວງພະບາງ ສົກຮຽນ 2025-2026 ໄດ້ລາຍງານຄື ໃນນະຄອນຫຼວງພະບາງມີຈຳນວນໂຮງຮຽນປະຖົມສຶກສາທັງໝົດ 94 ແຫ່ງ, ໂຮງຮຽນປະຖົມສົມບູນ 77 ແຫ່ງ, ຈຳນວນໂຮງຮຽນພາກເອກະຊົນ 20 ແຫ່ງ, ໃນເທດສະບານມີ 7 ກຸ່ມສຶກສາ ແລະ ນອກເທດສະບານມີ 7 ກຸ່ມສຶກສາ, ຈຳນວນຫ້ອງຮຽນທັງໝົດ 426 ຫ້ອງ,ໃນນີ້ຫ້ອງຄວບ 80 ຫ້ອງເທົ່າກັບ 18,77% ຂອງຫ້ອງຮຽນທັງໝົດ, ມີຄູສອນທັງໝົດ 584 ຄົນ,ຍິງ 423 ຄົນ, ມີນັກຮຽນທັງໝົດ 10,566 ຄົນ,ຍິງ 5,030 ຄົນ (ນັກຮຽນພາກເອກະຊົນມີ 3,942 ຄົນ,ຍິງ 1,878 ຄົນ) ເຊິ່ງເຫັນໄດ້ວ່າ ໂດຍພາບລວມແລ້ວ ພໍ່ແມ່ຜູ້ປົກຄອງສ່ວນຫຼາຍຍັງນິຍົມສົ່ງລູກເຂົ້າຮຽນໂຮງຮຽນພາກລັດ (Office of Education and Sports of Luang Prabang Municipality, 2025).

ຈາກບັນຫາທີ່ກ່າວມາຂ້າງເທິງນັ້ນ, ຜູ້ຄົ້ນຄວ້າວິໄຈ ທີ່ເປັນຄູຜູ້ໜຶ່ງທີ່ໄດ້ຕິດພັນກັບວຽກງານການສຶກສາໃນພາກລັດ ແລະ ເຫັນວ່າການສຶກສາຂັ້ນພື້ນຖານຊັ້ນປະຖົມສຶກສາເປັນພື້ນຖານທີ່ສຳຄັນທີ່ສຸດໃນການສ້າງເດັກໃຫ້ມີຄວາມພ້ອມ. ດັ່ງນັ້ນ, ຜູ້ຄົ້ນຄວ້າວິໄຈຈຶ່ງ ມີຄວາມສົນໃຈສຶກສາ ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ

ແຂວງຫຼວງພະບາງ, ສຶກສາລະດັບຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ແລະ ສຶກສາປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປຄົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາໄດ້ແກ່ ຜູ້ປົກຄອງນັກຮຽນທີ່ສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ຈໍານວນ 20 ໂຮງຮຽນ, ສົກຮຽນ 2025-2026 ລວມທັງໝົດ 3,648 ຄົນ. ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາໄດ້ແກ່ ຜູ້ປົກຄອງນັກຮຽນທີ່ສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ຈໍານວນ 20 ໂຮງຮຽນ ໃນສົກຮຽນ 2025-2026, ການກໍານົດຂະໜາດກຸ່ມຕົວຢ່າງໂດຍໃຊ້ຕາຕະລາງຂອງ Krejcie and Morgan (1970) ໄດ້ກຸ່ມຕົວຢ່າງຈໍານວນ 346 ຄົນ, ຈາກນັ້ນ ດໍາເນີນການສຸ່ມແບບສັດສ່ວນ (Porportional random sampling) ແລະ ເຮັດການສຸ່ມແບບງ່າຍດາຍ (Simle Random sampling) (Vathanavong et al., 2025).

### 2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນເປັນແບບສອບຖາມ ເຊິ່ງປະກອບມີ 2 ພາກສ່ວນຄື:

- ພາກສ່ວນທີ 1: ແມ່ນຂໍ້ມູນກ່ຽວກັບການຕັດສິນໃຈຂອງຜູ້ປົກຄອງ ສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ເປັນລັກສະນະແບບມາດຕາສ່ວນ (Likert Scale) ເປັນຄໍາຖາມປາຍປິດ ເຊິ່ງແບ່ງອອກເປັນ 5 ລະດັບໃນການໃຫ້ຄະແນນ (Sisa-ard, 2013) ດັ່ງນີ້:

- ຄະແນນ 5 ໝາຍເຖິງ ມີການຕັດສິນໃຈຢູ່ໃນລະດັບຫຼາຍທີ່ສຸດ
- ຄະແນນ 4 ໝາຍເຖິງ ມີການຕັດສິນໃຈຢູ່ໃນລະດັບຫຼາຍ
- ຄະແນນ 3 ໝາຍເຖິງ ມີການຕັດສິນໃຈຢູ່ໃນລະດັບປານກາງ
- ຄະແນນ 2 ໝາຍເຖິງ ມີການຕັດສິນໃຈຢູ່ໃນລະດັບໜ້ອຍ
- ຄະແນນ 1ໝາຍເຖິງ ມີການຕັດສິນໃຈຢູ່ໃນລະດັບຫຼາຍໜ້ອຍທີ່ສຸດ

- ພາກສ່ວນທີ 2: ແມ່ນຂໍ້ມູນກ່ຽວກັບລະດັບຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ເຊິ່ງປະກອບມີ 5 ດ້ານ ຄື: ປັດໄຈດ້ານການຈັດຮຽນ-ການສອນ, ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ, ປັດໄຈດ້ານຊື່ສຽງຂອງໂຮງຮຽນ, ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມໂຮງຮຽນ ແລະ ປັດໄຈດ້ານຄ່າໃຊ້ຈ່າຍ. ລັກສະນະແບບສອບຖາມເປັນແບບມາດຕາສ່ວນ (Likert Scale) ເປັນຄໍາຖາມປາຍປິດ ເຊິ່ງແບ່ງອອກເປັນ 5 ລະດັບໃນການໃຫ້ຄະແນນ (Sisa-ard, 2013) ດັ່ງນີ້:

- ຄະແນນ 5 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານຫຼາຍທີ່ສຸດ
- ຄະແນນ 4 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານຫຼາຍ
- ຄະແນນ 3 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານປານກາງ
- ຄະແນນ 2 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານໜ້ອຍ
- ຄະແນນ 1 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານໜ້ອຍທີ່ສຸດ

### 2.3 ການຫາຄຸນະພາບຂອງເຄື່ອງມື

1) ການທົດສອບດັດຊະນີຄວາມສອດຄ່ອງ (Validity) ຜູ້ຄົ້ນຄວ້າໄດ້ນໍາເອົາເຄື່ອງມືໄປສະເໜີຕໍ່ອາຈານທີ່ປຶກສາ ແລະ ອາຈານຜູ້ຊ່ວຍທີ່ປຶກສາວິທະຍານິພົນເພື່ອແນະນໍາຂໍ້ບົກຜ່ອງ ແລະ ປັບປຸງແກ້ໄຂ. ຫຼັງຈາກນັ້ນນໍາເຄື່ອງມືທີ່ແກ້ໄຂປັບປຸງແລ້ວ ໄປສະເໜີຕໍ່ຜູ້ຊ່ຽວຊານ ຈໍານວນ 3 ທ່ານ ເພື່ອກວດສອບ, ພິຈາລະນາຄວາມເໝາະສົມ ແລະ ສອດຄ່ອງ ດ້ານເນື້ອໃນ (Content Validity), ຈາກນັ້ນ ນໍາມາຫາຄ່າດັດຊະນີຄວາມສອດຄ່ອງ (Index Of Item Objective Congruence: IOC) ຂອງເນື້ອໃນ ແລະ ໂຄງສ້າງ ຕາມຄວາມຄິດເຫັນຂອງຜູ້ຊ່ຽວຊານ (Fongsri, 2014) ທີ່ມີເກນກໍານົດ ຄ່າ IOC = 0.5 ຂຶ້ນໄປ ຈຶ່ງໃຊ້ໄດ້. ຜົນການທົດສອບ ໄດ້ຄ່າ IOC ຢູ່ລະຫວ່າງ 0.67 - 1.00 ເຊິ່ງເຫັນວ່າ ຜ່ານເກນທີ່ກໍານົດໄວ້ ແລະ ສາມາດນໍາໄປໃຊ້ໃນການເກັບຂໍ້ມູນຈິງໄດ້.

2) ການທົດສອບຄ່າຄວາມເຊື່ອໝັ້ນ (Reliability) ຜູ້ຄົ້ນຄວ້າ ໄດ້ນໍາເອົາແບບສອບຖາມທີ່ຜ່ານການກວດສອບດັດຊະນີຄວາມສອດຄ່ອງ (IOC) ຈາກຜູ້ຊ່ຽວຊານສໍາເລັດ ແລ້ວໄດ້ນໍາໄປທົດລອງ (Try out) ກັບຜູ້ປົກຄອງນັກຮຽນທີ່ກໍາລັງຮຽນໃນລະດັບຊັ້ນປະຖົມສຶກສາ ທີ່ບໍ່ແມ່ນກຸ່ມຕົວຢ່າງ ຈໍານວນ 30 ຄົນ, ແລ້ວນໍາມາຫາຄວາມເຊື່ອໝັ້ນ (Reliability) ດ້ວຍວິທີການຫາຄ່າສໍາປະສິດອາລຟາ (α-Coefficient) ວິທີຂອງຄອນບາກ ເຊິ່ງມີຄ່າຄວາມເຊື່ອໝັ້ນທີ່ຍອມຮັບໄດ້ຄື 0.80 ຂຶ້ນ (Yuenyaw, 2019) ໂດຍຜົນການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມໄດ້ 0.95 ເຊິ່ງຜ່ານເກນກໍານົດສາມດໄປນໍາໃຊ້ເກັບຂໍ້ມູນຈິງໄດ້.

### 2.4 ການເກັບກໍາ ແລະ ລວບລວມຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ ຜູ້ຄົ້ນຄວ້າໄດ້ດໍາເນີນການເກັບກໍາ ແລະ ລວບລວມຂໍ້ມູນຕາມຂັ້ນຕອນ ດັ່ງນີ້:

1) ຜູ້ຄົ້ນຄວ້າຂໍໜັງສືເໜີຈາກ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ເພື່ອຂໍຄວາມຮ່ວມມືໄປຍັງຫ້ອງການສຶກສາທິການ ແລະ ກິລາ ນະຄອນຫຼວງພະບາງ ໃນການອະນຸມັດໃຫ້ລົງເກັບກໍາຂໍ້ມູນຕາມກຸ່ມເປົ້າໝາຍກໍານົດ.

2) ຜູ້ຄົ້ນຄວ້າໄດ້ນໍາແບບສອບຖາມ ພ້ອມທັງໜັງສືສະເໜີຂໍອະນຸມັດໄປຍັງໂຮງຮຽນ ແລະ ອະທິບາຍກ່ຽວກັບຈຸດປະສົງ ວິທີການເກັບຂໍ້ມູນ ໃຫ້ກັບຜູ້ຮັບຊອບໃນແຕ່ລະໂຮງຮຽນ ເພື່ອຂໍຄວາມຮ່ວມມືໃນການລົງເກັບຂໍ້ມູນຄັ້ງນີ້.

3) ຊ່ວງໄລຍະເວລາໃນການເກັບຂໍ້ມູນນໍາຜູ້ປົກຄອງນັກຮຽນແມ່ນຊ່ວງຕອນທີ່ຜູ້ປົກຄອງມາຮັບນັກຮຽນກັບບ້ານ ເຊິ່ງເປັນຊ່ວງທີ່ເ

ໝາະສົມທີ່ສຸດ ໂດຍຂໍຄວາມຮ່ວມມືໃນການຕອບແບບສອບຖາມ ປະມານ 10-15 ນາທີ.

4) ພາຍຫຼັງເກັບຂໍ້ມູນນຳຜູ້ປົກຄອງສຳເລັດ ແລະ ໄດ້ຄົບຕາມຈຳນວນທີ່ກຳນົດໄວ້ແລ້ວ ຜູ້ຄົ້ນຄວ້າໄດ້ມາກວດສອບຄວາມຖືກຕ້ອງຂອງແບບສອບຖາມ ເພື່ອນຳມາວິເຄາະຂໍ້ມູນ ແລະ ຕີຄວາມໝາຍຂໍ້ມູນທາງສະຖິຕິ ໂດຍນຳໃຊ້ໂປຣແກຣມຄອມພິວເຕີ.

### 2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນ ແມ່ນນຳໃຊ້ສະຖິຕິພັນລະນາ (Descriptive Statistics) ເພື່ອຫາຄ່າສະເລ່ຍ ($\bar{X}$), ຄ່າຜັນປ່ຽນມາດຕະຖານ (S.D) ແລະ ນຳໃຊ້ສະຖິຕິອ້າງອີງ ເພື່ອວິເຄາະການຖົດຖອຍພະຫຸຄູນ (Multiple Regression Analysis), ດ້ວຍການນຳໃຊ້ໂປຣແກມສຳເລັດຮູບທາງສະຖິຕິ SPSS version 22.0 ເຂົ້າໃນການວິເຄາະຂໍ້ມູນ.

ເກນທີ່ໃຊ້ໃນການແປຄວາມໝາຍການຕັດສິນໃຈຂອງຜູ້ປົກສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

ຄະແນນສະເລ່ຍ 4.50 – 5.00 ໝາຍເຖິງ ມີຜົນຕໍ່ການຕັດສິນໃຈຂອງທ່ານຫຼາຍທີ່ສຸດ

ຄະແນນສະເລ່ຍ 3.50 – 4.49 ໝາຍເຖິງ ມີຜົນຕໍ່ການຕັດສິນໃຈຂອງທ່ານຫຼາຍທີ່ສຸດ

ຄະແນນສະເລ່ຍ 2.50 – 3.49 ໝາຍເຖິງ ມີຜົນຕໍ່ການຕັດສິນຂອງທ່ານຫຼາຍທີ່ສຸດ

ຄະແນນສະເລ່ຍ 1.50 – 2.49 ໝາຍເຖິງ ມີຜົນຕໍ່ການຕັດສິນໃຈ ຂອງທ່ານຫຼາຍທີ່ສຸດ

ຄະແນນສະເລ່ຍ 1.00 – 1.49 ໝາຍເຖິງ ມີຜົນຕໍ່ການຕັດສິນຂອງທ່ານຫຼາຍທີ່ສຸດ

ເກນທີ່ໃຊ້ໃນການແປຄວາມໝາຍລະດັບຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໃຈທີ່ສົ່ງຜົນຕໍ່ການຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

ຄະແນນສະເລ່ຍ 4.50 – 5.00 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານຫຼາຍທີ່ສຸດ

ຄະແນນສະເລ່ຍ 3.50 – 4.49 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານຫຼາຍທີ່ສຸດ

ຄະແນນສະເລ່ຍ 2.50 – 3.49 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານຫຼາຍທີ່ສຸດ

ຄະແນນສະເລ່ຍ 1.50 – 2.49 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານຫຼາຍທີ່ສຸດ

ຄະແນນສະເລ່ຍ 1.00 – 1.49 ໝາຍເຖິງ ຂໍ້ຄວາມທີ່ສອດຄ່ອງກັບຄວາມຄິດເຫັນຂອງທ່ານຫຼາຍທີ່ສຸດ

## 3. ຜົນໄດ້ຮັບ

### 3.1 ຜົນການວິເຄາະຂໍ້ມູນການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນ ໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ພົບວ່າ ໂດຍລວມຢູ່ໃນລະດັບຫຼາຍ ($\bar{X}$ = 4.16, S.D = 0.59) ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ ທຸກຂໍ້ມີຄ່າສະເລ່ຍຢູ່ໃນລະດັບຫຼາຍທຸກຂໍ້ ເຊິ່ງຂໍ້ທີ່ມີຄ່າສະເລ່ຍສູງສຸດ ໄດ້ແກ່ ຄ່າລົງທະບຽນ ແລະ ຄ່າໃຊ້ຈ່າຍຕ່າງໆ ມີຄວາມເໝາະສົມກັບເສດຖະກິດຄອບຄົວ ($\bar{X}$ = 4.37, S.D = 0.75), ຮອງລົງມາໄດ້ແກ່ ບຸກຄະລາກອນ, ຄູສອນ ມີມະນຸດສຳພັນທີ່ດີ ແລະ ພ້ອມໃຫ້ຄຳປຶກສາ ($\bar{X}$ = 4.31, S.D = 0.87), ອາຄານສະຖານທີ່ ແລະ ສະພາບແວດລ້ອມມີຄວາມປອດໄພ ແລະ ເອື້ອອຳນວຍຕໍ່ການຮຽນຮູ້ ($\bar{X}$ = 4.29, S.D = 0.86) ຕາມລຳດັບ ແລະ ຂໍ້ທີ່ມີຄ່າສະເລ່ຍຕໍ່າກວ່າໝູ່ແມ່ນ ກິດຈະກຳເສີມຫຼັກສູດຂອງໂຮງຮຽນມີຄວາມຫຼາກຫຼາຍ ແລະ ໜ້າສົນໃຈ ($\bar{X}$ = 3.87, S.D. = 0.99. (ຕາຕະລາງ 1)

### 3.2 ຜົນການວິເຄາະຂໍ້ມູນລະດັບຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໃຈທີ່ສົ່ງຜົນຕໍ່ການຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

ລະດັບຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໃຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍລວມພົບວ່າ ມີຄ່າສະເລ່ຍຢູ່ໃນລະດັບຫຼາຍ ມີ $\bar{X}$ = 4.15 ແລະ S.D = 0.56. ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ ທຸກດ້ານຢູ່ໃນລະດັບຫຼາຍ ລຽງຕາມລຳດັບຄ່າສະເລ່ຍໄດ້ແກ່ ປັດໃຈດ້ານບຸກຄະລາກອນພາຍໃນໂຮງຮຽນ ມີ $\bar{X}$ = 4.26; S.D = 0.64, ປັດໃຈດ້ານຄ່າໃຊ້ຈ່າຍ ມີ $\bar{X}$ = 4.17; S.D = 0.70, ປັດໃຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ ມີ $\bar{X}$ = 4.13; S.D = 0.65, ປັດໃຈດ້ານຊື່ສຽງຂອງໂຮງຮຽນ ມີ $\bar{X}$ = 4.10; S.D = 0.69 ແລະ ປັດໃຈດ້ານການຮຽນການສອນ ມີ $\bar{X}$ = 4.07; S.D = 0.68. (ຕາຕະລາງ 2)

### 3.3 ຜົນການວິເຄາະຂໍ້ມູນປັດໃຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

ຈາກການວິເຄາະສຳປະສິດທິດຖອຍພະຫຸຄູນ ພົບວ່າ ມີ 5 ປັດໃຈ ຄື: ປັດໃຈດ້ານການຮຽນການສອນ, ປັດໃຈດ້ານບຸກຄະລາກອນພາຍໃນໂຮງຮຽນ, ປັດໃຈດ້ານຊື່ສຽງຂອງໂຮງຮຽນ, ປັດໃຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ ແລະ ປັດໃຈດ້ານຄ່າໃຊ້ຈ່າຍ ມີຄວາມສຳພັນກັບການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ 85.9% (R = 0.859) ແລະ ຍັງສາມາດພະຍາກອນການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງ

ພະບາງ ແຂວງຫຼວງພະບາງ ໄດ້ 73.8% ($R^2$ = 0.738) ແລະ ເຫັນວ່າ ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ ($X_2$) ມີຄ່າ Sig.= 0.002, ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ ($X_4$) ມີຄ່າ Sig.= 0.000 ແລະ ປັດໄຈດ້ານຄ່າໃຊ້ຈ່າຍ ($X_5$) ມີຄ່າ Sig.= 0.000 ເຊິ່ງເຫັນວ່າ ມີຄ່ານ້ອຍກວ່າ 0.05. ດັ່ງນັ້ນ, ສະຫຼຸບວ່າ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ປະກອບມີ 3 ປັດໄຈ ຄື: ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ ($X_2$), ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ ($X_4$) ແລະ ປັດໄຈດ້ານຄ່າໃຊ້ຈ່າຍ ($X_5$) ແມ່ນມີຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 (ຕາຕະລາງທີ 3). ດັ່ງນັ້ນ, ຈຶ່ງສາມາດຂຽນສົມຜົນພະຍາກອນໂອກາດທີ່ຜູ້ປົກຄອງຈະຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໃນຮູບແບບຄະແນນດິບ (Y) ໄດ້ດັ່ງລຸ່ມນີ້:

$$Y = 0.507 + 0.145(X_2) + 0.053(X_4) + 0.407(X_5)$$

ສົມຜົນການພະຍາກອນ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໄດ້ສົມຜົນການຖົດຖອຍພະຫຸຄູນ ໃນຮູບແບບມາດຖານ ດັ່ງນີ້:

$$Y' = 0.145(X_2) + 0,053(X_4) + 0.407(X_5)$$

ສະນັ້ນ, ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ປະກອບມີ 3 ປັດໄຈ ໄດ້ແກ່ ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ, ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ ແລະ ປັດໄຈດ້ານຄ່າໃຊ້ຈ່າຍ ດ້ວຍລະດັບຄວາມສຳຄັນ 0.05.

## 4. ວິພາກຜົນ

ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ພົບວ່າ ໂດຍລວມໃນລະດັບຫຼາຍ. ເມື່ອພິຈາລະນາເປັນລາຍຂໍ້ ພົບວ່າ ທຸກຂໍ້ທີ່ມີຄ່າສະເລ່ຍໃນລະດັບຫຼາຍ ໄດ້ແກ່ ຄ່າລົງທະບຽນ ແລະ ຄ່າໃຊ້ຈ່າຍຕ່າງໆມີຄວາມ ເໝາະສົມກັບເສດຖະກິດຄອບຄົວ, ບຸກຄະລາກອນ, ຄູສອນ ມີມະນຸດສຳພັນທີ່ດີ ແລະ ພ້ອມໃຫ້ຄຳປຶກສາ, ອາຄານສະຖານທີ່ ແລະ ສະພາບແວດລ້ອມມີຄວາມປອດໄພ ແລະ ເອື້ອຕໍ່ການຮຽນຮູ້, ທ່ານເຊື່ອໝັ້ນໃນຊື່ສຽງ ແລະ ມາດຕະຖານການສຶກສາທີ່ໂຮງຮຽນໄດ້ຮັບ, ໂຮງຮຽນພາກລັດ ເພາະມີຮູບແບບການຈັດຮຽນ-ການສອນທີ່ທັນສະໄໝ ແລະ ກິດຈະກຳເສີມຫຼັກສູດຂອງໂຮງຮຽນມີຄວາມຫຼາກຫຼາຍ ແລະ ໜ້າສົນໃຈ ເຊິ່ງມີຄວາມສອດຄ່ອງກັບການຄົ້ນຄວ້າຂອງ Nernsai et al. (2018) ໄດ້ຄົ້ນຄວ້າປັດໄຈການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກຫຼານເຂົ້າຮຽນໂຮງຮຽນເອກະຊົນໃນພື້ນທີ່ສຳນັກງານເຂດຍານາວາ ເຊິ່ງພົບວ່າ ການຕັດສິນໃຈໄດ້ແກ່ ດ້ານບົດບາດຂອງຄູອະນຸບານ, ດ້ານການບໍລິຫານວິຊາການ, ດ້ານການຈັດປະສົບການ ແລະ ກິດຈະກຳການຮຽນຮູ້, ດ້ານຊື່ສຽງຂອງໂຮງຮຽນ ແລະ ຄ່າທຳນຽມການຮຽນ, ສອດຄ່ອງກັບການຄົ້ນຄວ້າຂອງ Hansapan et al (2025) ໄດ້ຄົ້ນຄວ້າກ່ຽວກັບ ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນໂຮງຮຽນອະນຸບານມາຣີນິຣາມິນ ແຂວງຈັນທະບູລີ ຜົນການຄົ້ນຄວ້າພົບວ່າ ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກຫຼານເຂົ້າໂຮງຮຽນອະນຸບານມາຣີນິຣາມິນ ແຂວງຈັນທະບູລີ ໂດຍລວມຢູ່ໃນລະດັບຫຼາຍທຸກດ້ານ ໄດ້ແກ່ ດ້ານຄວາມສຳພັນລະຫວ່າງໂຮງຮຽນ ແລະ ຊຸມຊົນ, ດ້ານຄ່າໃຊ້ຈ່າຍໃນການສຶກສາ ແລະ ດ້ານອາຄານສະຖານທີ່ ແລະ ສິ່ງແວດລ້ອມ. ນອກຈາກນີ້, ຜົນການຄົ້ນຄວ້າຍັງມີຄວາມສອດຄ່ອງກັບການຄົ້ນຄວ້າຂອງ Sattayasomboon & Sattayasomboon (2022) ພົບວ່າ ລະດັບການຕັດສິນໃຈໃນການສົ່ງລູກເຂົ້າສຶກສາຕໍ່ໃນວິທະຍາໄລສັງກັດສະຖາບັນພຣະບໍຣົມມາຣາຊານົກ ກະຊວງສະທາລະນະສຸກ ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງປະກອບມີ ດ້ານເສດຖະກິດສັງຄົມ, ດ້ານພາບລັກຂອງວິທະຍາໄລ, ດ້ານສະຖານທີ່, ດ້ານປະຊາສຳພັນ ແລະ ດ້ານເຫດຜົນສ່ວນຕົວ.

ຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍພາບລວມ ແລະ ລາຍດ້ານ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງປັດໄຈທີ່ຜູ້ປົກຄອງນັກຮຽນໃຫ້ຄວາມຄິດເຫັນສູງທີ່ສຸດ ແມ່ນປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ, ຮອງລົງມາແມ່ນປັດໄຈດ້ານຄ່າໃຊ້ຈ່າຍ, ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ, ປັດໄຈດ້ານຊື່ສຽງຂອງໂຮງຮຽນ ແລະ ປັດໄຈທີ່ມີລະດັບຄວາມຄິດເຫັນໃນລະດັບຕໍ່າກວ່າໝູ່ ແມ່ນປັດໄຈດ້ານການຈັດການຮຽນ-ການສອນ ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Nguanngamsri et al. (2018) ເຊິ່ງຜົນການຄົ້ນຄວ້າຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງນັກຮຽນເຂົ້າຮຽນຢູ່ໃນໂຮງຮຽນປະຖົມເອກະຊົນໃນເຂດເມືອງ ລາດກະບັງ ກຸງເທບມະຫານະຄອນ ຢູ່ໃນລະດັບຫຼາຍທີ່ສຸດ 4 ປັດໄຈ ຄື ປັດໄຈດ້ານຊື່ສຽງຂອງໂຮງຮຽນ, ປັດໄຈດ້ານອາຄານສະຖານທີ່, ປັດໄຈດ້ານອຳນວຍຄວາມສະດວກ ແລະ ການບໍລິການ, ປັດໄຈດ້ານຄວາມສຳພັນຂອງໂຮງຮຽນກັບຊຸມຊົນ ແລະ ຢູ່ລະດັບຫຼາຍມີ 1 ດ້ານຄື ປັດໄຈດ້ານຄ່າທຳນຽມການຮຽນ ເຊິ່ງຍັງສອດຄ່ອງກັບການຄົ້ນຄວ້າຂອງ Mueangnon & Atiwittayaporn (2023) ເຊິ່ງຜົນການຄົ້ນຄວ້າພົບວ່າ ລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນລະດັບປະຖົມສຶກສາໃນໂຮງຮຽນເອກະຊົນປະເພດສາມັນສຶກສາ ແຂວງນາຣາທິວາດ ໂດຍລວມ ແລະ ລາຍດ້ານຢູ່ໃນລະດັບຫຼາຍ ລຽງລຳດັບຈາກຫຼາຍໄປຫາໜ້ອຍ ໄດ້ແກ່ ປັດໄຈດ້ານຜະລິດຕະພັນ, ປັດໄຈດ້ານຂະບວນການເຮັດວຽກ, ປັດໄຈດ້ານຄູຜູ້

ໃຫ້ບໍລິການ, ປັດໄຈດ້ານທາງກາຍະພາບ, ປັດໄຈສິ່ງເສີມການຕະຫຼາດ, ປັດໄຈດ້ານການຈັດຈຳໜ່າຍ ແລະ ປັດໄຈດ້ານລາຄາ. ແລະ ຍັງສອດຄ່ອງກັບການຄົ້ນຄວ້າຂອງ Khamvongsi et al. (2023) ຜົນການຄົ້ນຄວ້າພົບວ່າ ປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນໃນໂຮງຮຽນອະນຸບານມະຫາເພັດ ບ້ານດອນຕະຫຼາດ ເມືອງຈຳປາສັກ ແຂວງຈຳປາສັກ ສປປ ລາວ ໂດຍລວມຢູ່ໃນລະດັບຫຼາຍທຸກດ້ານ ໂດຍລຽງລຳດັບຄ່າສະເລ່ຍຈາກຫຼາຍໄປຫາໜ້ອຍ ຄື ດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມ, ຮອງລົງມາມາດ້ານການບໍລິການ ແລະ ງານສຳພັນຊຸມຊົນ, ດ້ານການຈັດການຮຽນ-ການສອນ, ດ້ານຊື່ສຽງຂອງໂຮງຮຽນ ແລະ ດ້ານບົດບາດຂອງຄູຕາມລຳດັບ ແລະ ຍັງສອດຄ່ອງກັບການຄົ້ນຄົ້ນຂອງ Hongwiset (2017) ເຊິ່ງຜົນການຄົ້ນຄວ້າພົບວ່າ ຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈໃນການຕັດສິນໃຈສົ່ງລູກຫຼານເຂົ້າຮຽນໃນໂຮງຮຽນສິຣິສຸວິດ ໂດຍພາບລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນລາຍດ້ານ ພົບວ່າ ປັດໄຈທີ່ເຮັດໃຫ້ຜູ້ປົກຄອງສົ່ງລູກຫຼານເຂົ້າຮຽນໃນໂຮງຮຽນສິຣິສຸວິດ ໃນລະດັບຫຼາຍທີ່ສຸດ ຄື ປັດໄຈດ້ານຄູ, ຮອງລົງມາຄື ດ້ານພາບຫຼັກຂອງໂຮງຮຽນ, ດ້ານຄ່າທຳນຽມການຮຽນ, ດ້ານອາຄານສະຖານທີ່ ແລະ ສິ່ງແວດລ້ອມ ແລະ ອັນດັບສຸດທ້າຍຄື ດ້ານສິ່ງອຳນວຍຄວາມສະດວກ ແລະ ການໃຫ້ບໍລິການໜ້ອຍທີ່ສຸດ. ແລະ ນອກນັ້ນ ຍັງສອດຄ່ອງກັບການຄົ້ນຄວ້າຂອງ PheangKhamsone et al. (2025) ການສຶກສາພົບວ່າ ລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ແລະ ເມື່ອພິຈາລະນາໃນລາຍລະອຽດແຕ່ລະດ້ານພົບວ່າ: ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ ດ້ານອາຈານສອນຢູ່ໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນດ້ານສັງຄົມຢູ່ໃນລະດັບຫຼາຍທີ່ສຸດ, ສ່ວນປັດໄຈດ້ານການເງິນແມ່ນຢູ່ໃນລະດັບຫຼາຍ, ຮອງລົງມາແມ່ນດ້ານສະຖາບັນການສຶກສາ, ດ້ານບຸກຄົນ, ດ້ານຫຼັກສູດ ແລະ ດ້ານບັນຍາກາດສິ່ງແວດລ້ອມ ຕາມລຳດັບ ແລະ ປັດໄຈສິ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ ຢູ່ໃນລະດັບກາງມີ ປັດໄຈດ້ານການປະຊາສຳພັນ, ດ້ານອຸປະກອນ ແລະ ສື່ການຮຽນ-ການສອນ ຕາມລຳດັບ.

ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ພົບວ່າ ປັດໄຈດ້ານການຮຽນການສອນ ແລະ ປັດໄຈດ້ານຊື່ສຽງຂອງໂຮງຮຽນ ແມ່ນບໍ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ, ໃນນັ້ນ ປັດໄຈດ້ານຄ່າໃຊ້ຈ່າຍ ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ຫຼາຍທີ່ສຸດ ແລະ ຕໍ່ມາແມ່ນປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ, ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ ຕາມ ເຊິ່ງໄດ້ສອດຄ່ອງກັບການຄົ້ນຄວ້າຂອງ Aunsiri et al. (2018) ໄດ້ຄົ້ນຄວ້າ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກຫຼານສຶກສາໃນໂຮງຮຽນມັດທະຍົມສຶກສາຂະໜາດນ້ອຍ ສັງກັດສຳນັກງານເຂດພື້ນທີ່ມັດທະຍົມສຶກສາ ເຂດ 6 ເຊິ່ງຜົນການຄົ້ນຄວ້າພົບວ່າ ປັດໄຈດ້ານໂຮງຮຽນ, ປັດໄຈດ້ານບຸກຄະລາກອນ ແລະ ປັດໄຈດ້ານຄ່ານິຍົມຂອງຜູ້ປົກຄອງ: ສອດຄ່ອງກັບການຄົນຄວ້າຂອງ Mitporn (2023) ໄດ້ສຶກສາ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈໃນການສົ່ງລູກຫຼານຮຽນພາສາຈີນພຣະມາຫາໄທ ແຂວງຊຽງໃໝ່ ຜົນການຄົ້ນຄວ້າພົບວ່າ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈໃນການສົ່ງລູກຫຼານຮຽນພາສາຈີນພຣະມາຫາໄທ ແຂວງຊຽງໃໝ່ ມີ ປັດໄຈດ້ານການຮຽນການສອນ, ປັດໄຈດ້ານບຸກຄາລາກອນຂອງໂຮງຮຽນ, ປັດໄຈດ້ານຄວາມຕ້ອງການສ່ວນບຸກຄົນ, ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ ແລະ ປັດໄຈດ້ານຄ່າໃຊ້ຈ່າຍ ແລະ ຜົນການຄົ້ນຄວ້າກົງກັນຂ້າມກັບການຄົ້ນຄວ້າຂອງ Intharapun et., al (2020) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງໃນການໃຫ້ລູກຫຼານເຂົ້າຮຽນໃນຂັ້ນມັດທະຍົມປີທີ 4 ໂຮງຮຽນວິທະຍາສາດຈຸລາວິທະຍາໃນເຂດພາກກາງ ແລະ ພາກຕາເວັນອອກ ຜົນການຄົ້ນຄວ້າພົບວ່າ ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອງຂອງໂຮງຮຽນ, ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ, ປັດໄຈດ້ານຊື່ສຽງຂອງໂຮງຮຽນ, ປັດໄຈດ້ານບໍລິການ ແລະ ສະຫວັດດີການ, ປັດໄຈດ້ານຄ່າໃຊ້ຈ່າຍ ບໍ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງການໃຫ້ລູກຫຼານເຂົ້າຮຽນໃນຂັ້ນມັດທະຍົມປີທີ 4 ໂຮງຮຽນວິທະຍາສາດຈຸລາວິທະຍາໃນເຂດພາກກາງ ແລະ ພາກຕາເວັນອອກ.

## 5. ສະຫຼຸບ

ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນ ໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງໃນນັ້ນຜູ້ປົກຄອງນັກຮຽນໄດ້ໃຫ້ຄວາມສຳຄັນໃນການຕັດສິນໃຈສົ່ງລູກເຂົ້າຮຽນ ໂຮງຮຽນປະຖົມສຶກສາພາກລັດ ເປັນອັນດັບທຳອິດແມ່ນຄ່າລົງທະບຽນ ແລະ ຄ່າໃຊ້ຈ່າຍຕ່າງໆ ມີຄວາມ ເໝາະສົມກັບເສດຖະກິດຄອບຄົວ, ຮອງລົງມາແມ່ນບຸກຄະລາກອນ, ຄູສອນ ມີມະນຸດສຳພັນທີ່ດີ ແລະ ພ້ອມໃຫ້ຄຳປຶກສາ,ອາຄານສະຖານທີ່ ແລະ ສະພາບແວດລ້ອມມີຄວາມປອດໄພ ແລະ ເອື້ອຕໍ່ການຮຽນຮູ້ ແລະ ຄວາມຮູ້, ຄວາມສາມາດ ແລະ ເອົາໃຈໃສ່ຂອງຄູສອນ ຕາມລຳດັບ ແລະ ຂໍ້ທີ່ຜູ້ປົກຄອງໃຫ້ຄວາມສຳຄັນໃນການຕັດສິນໃຈສົ່ງລູກເຂົ້າຮຽນຕ່ຳກວ່າໝູ່ແມ່ນກິດຈະກຳເສີມຫຼັກສູດຂອງໂຮງຮຽນມີຄວາມຫຼາກຫຼາຍ ແລະ ໜ້າສົນໃຈ.

ຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໂດຍລວມມີຄ່າສະເລ່ຍຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາເປັນລາຍດ້ານ ພົບວ່າທຸກດ້ານຢູ່ໃນລະດັບຫຼາຍ ລຽງຕາມລຳດັບຄ່າສະເລ່ຍຫຼາຍໄປຫາໜ້ອຍ ໄດ້ແກ່ ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ, ປັດໄຈດ້ານຄ່າໃຊ້ຈ່າຍ, ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ, ປັດໄຈດ້ານຊື່ສຽງຂອງໂຮງຮຽນ ແລະ ປັດໄຈດ້ານການຮຽນການສອນ.

ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງຜູ້ປົກຄອງສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ ໄດ້ແກ່ ປັດໄຈດ້ານຄ່າໃຊ້ຈ່າຍ, ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ ແລະ ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ

## 7. ເອກະສານອ້າງອີງ


Aunsiri, T., Kaewsuk, S., & Phattaraphakin, K. (2018). Factors affecting the decision making of parents on sending their children to study at small secondary school under the Educational Service Office Area 6. *Journal Name, Volume* (1), Page 11-22.

Disapong, J., Pirun, C., & Khetrat, P. (2016). Factors influencing parent's decision to enroll their children to Darunapolytechnic Technological College, Muang District, Ratchaburi Province. *Humanities and Social Science Research Promotion Network Journal*, 47–60.

Fongsri, P. (2014). *Design and development of research instruments*. Bangkok: Dansutha.

Hansapan, N., Pawchit, C., & Meesan, N. (2025). The decision making of parents to send their children to study at Anubanmaryniramon school Chanthaburi. *Naval Academy Journal of Humanities and Social Sciences, 12*(1), 135-148.

Hongwiset, S. (2017). *Parent opinions towards factors affecting their decision in sending children to study in Srisuvit School* [Master's thesis], Chonburi: Burapha University.

Intharapun, P., Phuangsomjit, C., & Buathong, S. (2020). Factors affecting parents' decision making in sending their children to study at Mattayom Suksa IV level at the Princess Chulabhorn's Science High Schools in the central and eastern regions. *Panyapiwat Journal, 12*(3), 270–283

Khamvongsi, C., Sasan, S., & Po-ngam, J. (2023). The factors affecting parents' decision to have their children study at Mahapet Kindergarten of Ban Dontalad in Champasak, Lao People's Democratic Republic. *Journal of Graduated School Pitchayatat, Ubon Ratchathani Rajabhat University, 18*(2), 115-126.

Krejcie, R. V., & Morgan, D. W. (1970). Determining sample size for research activities.
*Educational and Psychological Measurement, 30*(3), 607–610. (Note: Updated source details for accuracy).

Manivanh, P., Sutthilaksamunikul, S., & Khejornsart, R. (2021). The factors of parents' decision in allowing children to study at Vocational Technical College, Champasak Province, Lao PDR. *Journal of MCU Ubon, 10*(1), 121–133.

Mitporn, T. (2023). Factors affecting parents' decision to send their children to learn Chinese in Sacred Heart College Chiang Mai Province. *Nisit Wang Journal, 25*(1), 110–121.

Ministry of Education and Sports. (2016). *Law on Education (Revised edition).* Vientiane: Department of Personnel and Organization.

Ministry of Education and Sports. (2018). *National Education Strategic Plan 2021-2030.* Vientiane.

Ministry of Education and Sports. (2020). *Education and Sports Sector Development Plan (2021-2025).* Vientiane: Ministry of Education and Sports.

Mueangnon, S., & Atiwittayaporn, J. (2023). Factors affecting parents' decision making on sending their children to study early childhood education of general education private schools, Narathiwat Province. *Journal of Management and Local Innovation, 5*(1), 118–129.

Nernsai, T., Tangchitsomkit, W., & Labmala, S. (2018). The decision factors for parents to enroll their children in private kindergartens in Yannawa

District. *RMUTP Research Journal Humanities and Social Sciences, 3*(1), 47–58.

Nguanngamsri, C., Boonphak, K., & Sisan, B. (2018). Factors affecting to decision making process of parent on taking students to study in private elementary schools in Ladkrabang District, Bangkok. *Journal of Industrial Education, 17*(1), 136–144

National Assembly. (2015). *Law on Education (Revised edition).* Vientiane: President of the Lao PDR.

Office of Education and Sports of Luang Prabang Municipality. (2025). *Summary of the education and sports development plan implementation for the academic year 2024-2025 and the development plan for the academic year 2025-2026.* Luang Prabang: Office of Education and Sports of Luang Prabang Municipality.

PheangKhamsone, P., Somsamone, V., & Sifongxay, S. (2025). Factors influencing on students' decisions to study at Luang Prabang Traditional Arts College. *Souphanouvong University Journal of Multidisciplinary Research and Development, 11*(1), 156–136.

Sattayasomboon, T., & Sattayasomboon, Y. (2022). Parents' decision making to send relatives to study at colleges under the Faculty of Public Health and Allied Health Sciences, Praboromarajchanok Institute, Ministry of Public Health. *Thai Journal of Public Health and Health Sciences (TJPHS), 5*(1), 65–79.

Sisa-ard, B. (2013). *Preliminary research.* Bangkok: Suriviyasa.

UNESCO. (2019). *World heritage site management report: Luang Prabang.* Paris

Vathanavong, T., Chang, Y., & Souliya, T. (2025). *Educational research methodology.* Luang Prabang: Souphanouvong University.

World Bank. (2020). *Lao PDR human development report.*

Wacharadhorntumrong, P., Sirithadakunlaphat, S., Jamcharoen, P., Comchoo, S., & Totrakul, P. (2024). The factors affecting parents' decision to enroll their children in Anubanbanglamung School under the Office of Chonburi Primary Educational Service Area Office 3. *Journal of Education, Bansomdejchaopraya Rajabhat University, 18*(1), 14–27.

Waidee, J. (2017). *Decision making of parents to send their children to study at Banklongprao School under the Trat Primary Educational Service Area Office* [Master's thesis, Burapha University].

Yuenyaw, P. (2019). Factor analysis in characteristics of professional teacher in 21st century. *UMT. Poly Journal*, 470–480.

ຕາຕະລາງທີ 1: ສະແດງກ່ຽວກັບຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈທີ່ສົ່ງຜົນໃນການຕັດສິນສົ່ງລູກເຂົ້າຮຽນ ໂຮງຮຽນປະຖົມສຶກສາພາກລັດໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ.

| ລຳດັບ | ການຕັດສິນໃຈຂອງຜູ້ປົກຄອງໃນການສົ່ງລູກເຂົ້າຮຽນ | $\bar{X}$ | S.D | ແປຜົນ |
|---|---|---|---|---|
| 1 | ທ່ານຕັດສິນໃຈເລືອກໂຮງຮຽນພາກລັດ ເພາະມີຮູບແບບການຈັດຮຽນ-ການສອນທີ່ທັນສະໄໝ | 3.88 | 0.96 | ຫຼາຍ |
| 2 | ຄ່າລົງທະບຽນ ແລະ ຄ່າໃຊ້ຈ່າຍຕ່າງໆ ມີຄວາມ ເໝາະສົມກັບເສດຖະກິດຄອບຄົວ | 4.37 | 0.75 | ຫຼາຍ |
| 3 | ຄວາມຮູ້, ຄວາມສາມາດ ແລະ ເອົາໃຈໃສ່ຂອງຄູສອນ | 4.27 | 0.76 | ຫຼາຍ |
| 4 | ໂຮງຮຽນມີພາບລັກທີ່ດີ ແລະ ເປັນທີ່ຍອມຮັບຂອງຊຸມຊົນ ແລະ ສັງຄົມ | 4.09 | 0.89 | ຫຼາຍ |
| 5 | ບຸກຄະລາກອນ, ຄູສອນ ມີມະນຸດສຳພັນທີ່ດີ ແລະ ພ້ອມໃຫ້ຄຳປຶກສາ | 4.31 | 0.87 | ຫຼາຍ |
| 6 | ທ່ານເຊື່ອໝັ້ນໃນຊື່ສຽງ ແລະ ມາດຕະຖານການສຶກສາທີ່ໂຮງຮຽນໄດ້ຮັບ | 4.21 | 0.84 | ຫຼາຍ |
| 7 | ອາຄານສະຖານທີ່ ແລະ ສະພາບແວດລ້ອມມີຄວາມປອດໄພ ແລະ ເອື້ອຕໍ່ການຮຽນຮູ້ | 4.29 | 0.86 | ຫຼາຍ |
| 8 | ກິດຈະກຳເສີມຫຼັກສູດຂອງໂຮງຮຽນມີຄວາມຫຼາກຫຼາຍ ແລະ ໜ້າສົນໃຈ | 3.87 | 0.99 | ຫຼາຍ |
| | **ລວມ** | **4.16** | **0.59** | ຫຼາຍ |

ຕາຕະລາງ 2: ສະແດງຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

| ລຳດັບ | ຄວາມຄິດເຫັນຂອງຜູ້ປົກຄອງຕໍ່ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈ ໃນການສົ່ງລູກເຂົ້າຮຽນໂຮງຮຽນ | $\bar{X}$ | S.D | ແປຜົນ |
|---|---|---|---|---|
| 1 | ປັດໄຈດ້ານການຈັດການຮຽນ-ການສອນ | 4.07 | 0.68 | ລະດັບຫຼາຍ |
| 2 | ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ | 4.26 | 0.64 | ລະດັບຫຼາຍ |
| 3 | ປັດໄຈດ້ານຊື່ສຽງຂອງໂຮງຮຽນ | 4.10 | 0.69 | ລະດັບຫຼາຍ |
| 4 | ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ | 4.13 | 0.65 | ລະດັບຫຼາຍ |
| 5 | ປັດໄຈດ້ານຄ່າໃຊ້ຈ່າຍ | 4.17 | 0.70 | ລະດັບຫຼາຍ |
| **ລວມ** | | **4.15** | **0.56** | **ລະດັບຫຼາຍ** |

ຕາຕະລາງ 3: ສະແດງຄ່າສຳປະສິດສະຫະພັນຖົດຖອຍພະຫຸຄູນຂອງປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈສົ່ງລູກເຂົ້າຮຽນໂຮງຮຽນປະຖົມສຶກສາພາກລັດ ໃນເທດສະບານ ນະຄອນຫຼວງພະບາງ ແຂວງຫຼວງພະບາງ

| **Coefficients**[a] | | | | | |
|---|---|---|---|---|---|
| Model | | B (b) | Beta (β) | t | Sig. |
| 1 | (Constant) | 0.507 | | 4.098 | 0.000* |
| | ປັດໄຈດ້ານການຈັດການຮຽນ-ການສອນ ($X_1$) | 0.046 | 0.053 | 1.370 | 0.172 |
| | ປັດໄຈດ້ານບຸກຄະລາກອນພາຍໃນໂຮງຮຽນ ($X_2$) | 0.145 | 0.456 | 3.105 | 0.002* |
| | ປັດໄຈດ້ານຊື່ສຽງຂອງໂຮງຮຽນ ($X_3$) | 0.053 | 0.062 | 1.343 | 0.180 |
| | ປັດໄຈດ້ານອາຄານສະຖານທີ່ ແລະ ສະພາບແວດລ້ອມຂອງໂຮງຮຽນ ($X_4$) | 0.227 | 0.247 | 5.701 | 0.000* |
| | ປັດໄຈດ້ານຄ່າໃຊ້ຈ່າຍ ($X_5$) | 0.407 | 0.483 | 13.017 | 0.000* |
| R = 0.859 $R^2$ = 0.738 Std. Error = 0.30773 | | | | | |

<u>Remark:</u> * significant at 0.01; ** significant at 0.05; $^{ns}$ not significant.